ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ເລກທີ 700 /ສສກ
ນະຄອນຫຼວງວຽງຈັນ, ວັນທີ 06 FEB 2017

# ຂໍ້ຕົກລົງຂອງລັດຖະມົນຕີ
# ວ່າດ້ວຍກອງທຶນສະຫວັດດີການຄູແຫ່ງຊາດ ( ສະບັບປັບປຸງ )

- ອີງຕາມ ກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ) ສະບັບເລກທີ 62/ສພຊ,ລົງວັນທີ 16 ກໍລະກົດ 2015;
- ອີງຕາມ ດໍາລັດນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງວັນທີ 07 ກັນຍາ 2011;
- ອີງຕາມ ການຄົ້ນຄ້ວາຂອງກົມຈັດຕັ້ງ ແລະ ພະນັກງານ.

## ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ
## ຈຶ່ງຕົກລົງ:
## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກໍານົດລະບຽບການ ກ່ຽວກັບການຄຸ້ມຄອງ, ການນໍາໃຊ້, ການຕິດຕາມ ແລະ ກວດກາກອງທຶນສະຫວັດດີການຄູແຫ່ງຊາດ ເພື່ອເປັນການສະສົມທຶນ, ການອຸດໜູນ, ການຊ່ວຍເຫຼືອຊຶ່ງກັນ ແລະ ກັນໃນເວລາເຈັບເປັນ ແລະ ໃຫ້ສະຫວັດດີການເວລາເສຍຊີວິດຂອງ ຄູ-ບຸກຄະລາກອນໃນຂະແໜງການສຶກສາທິການ ແລະ ກິລາ ແນໃສ່ເສີມສ້າງຂວັນກໍາລັງໃຈ, ຄວາມສາມັກຄີ, ຊ່ວຍເຫຼືອຊຶ່ງກັນ ແລະ ກັນ, ຄວາມອຸ່ນອ່ຽງທຸ່ນທ່ຽງໃນການປະຕິບັດໜ້າທີ່ວຽກງານ ແລະ ຄວາມໝັ້ນຄົງຕໍ່ວິຊາຊີບ.

**ມາດຕາ 2 ກອງທຶນສະຫວັດດີການຄູແຫ່ງຊາດ**

ກອງທຶນສະຫວັດດີການຄູແຫ່ງຊາດ ຂຽນຫຍໍ້ວ່າ **''ກສຄ''** ຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຂອງກະຊວງສຶກສາທິການ ແລະ ກິລາ. ຊຶ່ງແມ່ນກອງທຶນທີ່ໄດ້ມາຈາກການສະສົມທຶນ ແລະ ປະກອບສ່ວນຂອງພາກສ່ວນຕ່າງໆ ເພື່ອຊຸກຍູ້ ແລະ ສົ່ງເສີມຄູ-ບຸກຄະລາກອນການສຶກສາ ແລະ ກິລາ.

**ມາດຕາ 3 ຫຼັກການລວມ**

ກອງທຶນສະຫວັດດີການຄູແຫ່ງຊາດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ລວມສູນ ແລະ ເປັນເອກະພາບຕາມລະບຽບ ແລະ ກົດໝາຍ;
2. ຮັບປະກັນການນໍາໃຊ້ກອງທຶນໃຫ້ຖືກຕ້ອງຕາມເປົ້າໝາຍ, ປະຢັດ, ໂປ່ງໃສ ແລະ ສາມາດກວດສອບໄດ້;